Arkansas Division of
Workforce Services

Michael Preston
SECRETARY OF COMMERCE
Charisse Childers, Ph.D.
DIRECTOR,
DIVISION OF WORKFORCE SERVICES

# ແຈ້ງການໃຫ້ພະນັກງານ-ລູກຈ້າງ

ມີຜົນປະໂຫຍດໃນການຮັບເງິນປະກັນວ່າງງານ (UI) ສໍາລັບຄົນງານທີ່ວ່າງງານ ທີ່ມີເງື່ອນໄຂ ຄົບອີງຕາມກົດໝາຍການມີສິດຮັບເງິນປະກັນວ່າງງານ (UI) ແຫ່ງຣັຖອາຄັນຊໍ. ທ່ານສາມາດຍື່ນຄໍາຮຽກຮ້ອງສິດຮັບ UI ໄດ້ຕັ້ງແຕ່ອາທິດທໍາອິດທີ່ທ່ານຖືກວ່າງງານຫລືຖືກຫຼຸດຊົ່ວໂມງເຮັດວຽກ.

ທ່ານຈໍາເປັນຕ້ອງຈັດສົ່ງຂໍ້ມູນຕໍ່ລົງໄປນີ້ ໃຫ້ແກ່ ພະແນກບໍຣິການຄົນງານແຫ່ງຣັຖອາຄັນຊໍ ທາງພະແນກຈຶ່ງຈະສາມາດດໍາເນີນການຕາມຄໍາຮຽກຮ້ອງສິດຂອງທ່ານໄດ້:

1. ຊື່-ນາມສະກຸນເຕັມທາງກົດໝາຍຂອງທ່ານ

2. ເລກປະກັນສັງຄົມຂອງທ່ານ

3. ໃບອະນຸຍາດເຮັດການ (ຖ້າທ່ານບໍ່ຖືສັນຊາດອະເມຣິກັນ ຫລືບໍ່ມີບັດຜູ້ຢູ່ອາໄສຢ່າງຖາວອນ)

ເພື່ອຍື່ນຄໍາຮຽກຮ້ອງສິດທາງອິນເທີແນັດ ຈົ່ງເປີດເບິ່ງບ່ອນຍື່ນຄໍາຮຽກຮ້ອງສິດໃນຣັຖອາຄັນຊໍເຮົາຢູ່ທີ່ https://www.ezarc.adws.arkansas.gov/ ຕັ້ງແຕ່ 6 ໂມງເຊົ້າ ເຖິງ 6 ໂມງແລງ ທຸກວັນຈັນ ເຖິງ ວັນສຸກ ແລະ ຕັ້ງແຕ່ 7 ໂມງເຊົ້າ ເຖິງ 6 ໂມງແລງ ທຸກວັນອາທິດ.

ເພື່ອຍື່ນຄໍາຮຽກຮ້ອງສິດເປັນເຈ້ຍ ຈົ່ງໄປຫາຫ້ອງການພະແນກບໍຣິການຄົນງານແຫ່ງຣັຖອາຄັນຊໍທີ່ໃກ້ບ້ານຂອງທ່ານ. ທ່ານສາມາດຊອກຫາຫ້ອງການພະແນກບໍຣິການຄົນງານແຫ່ງຣັຖອາຄັນຊໍທີ່ໃກ້ບ້ານທີ່ສຸດໄດ້ທີ່ www.dws.arkansas.gov/contact.

ເພື່ອຂໍຄວາມຊ່ວຍເຫລືອທົ່ວໄປ ຫຼື ຂໍຂໍ້ມູນເພີ່ມເຕີມກ່ຽວກັບການຍື່ນຄໍາຮຽກຮ້ອງສິດຮັບ UI,
ຈົ່ງໂທ 1-844-908-2178 ຫຼື ໂທ 501-682-2121.
ໂມງເປີດໃຫ້ບໍຣິການ: ວັນຈັນ ເຖິງ ວັນສຸກ ຈາກ 8:00 ໂມງເຊົ້າ ເຖິງ ຕອນບ່າຍ 3:30.

ຖ້າທ່ານມີຄໍາຖາມກ່ຽວກັບສະພາບຂອງຄໍາຮຽກຮ້ອງສິດຮັບ UI ຂອງທ່ານ, ທ່ານສາມາດໂທຖາມທີ່ ຫ້ອງການປະຈໍາທ້ອງຖິ່ນຂອງທ່ານ ຫຼື ໂທ 1-844-908-2178.